ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

---------------------------

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກົມທີ່ດິນ

ຊື່ຂອງໂຄງການ ສ້າງຄວາມເຂັ້ມແຂງການຂຶ້ນທະບຽນ ອອກໃບຕາດິນຢ່າງເປັນລະບົບ (ESLRP)

ສັນຍາເລກທີ: G-14

№ . 0451

ເລກທີ:............../ກຊສ.ກທດ

ນະຄອນຫຼວງວຽງຈັນ, ວັນທີ: 07 FEB 2024

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ຜູ້ສະໜອງສິນຄ້າດ້ານ ໄອຊີທີ, ທີ່ນັບຖື

1. ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ແລະ ເງິນຊ່ວຍເຫຼືອລ້າຈາກ SDC ຈຳນວນເງິນກູ້ຢືມ ຫຼື ສັນຍາກູ້ຢືມ: ຈຳນວນ 31 ລ້ານໂດລາສະຫະລັດ ເພື່ອຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງວຽກງານຂຶ້ນທະບຽນອອກໃບຕາດິນຢ່າງເປັນລະບົບ (ESLRP). ກົມທີ່ດິນໄດ້ດຳເນີນການປະມູນຈັດຊື້ເຄື່ອງອຸປະກອນດ້ານໄອຊີທີ **(ຄອມພິວເຕີໂນດບຸກ-ຄອມພິວເຕີຕັ້ງໂຕະ-ເຄື່ອງພິມ+ເຄື່ອງກອັບປີ້-ເຄື່ອງສະແກນເນີ)** ດ້ວຍການປະມູນແບບສົມທຽບລາຄາ.
2. ກົມທີ່ດິນ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ ເຄື່ອງອຸປະກອນດ້ານໄອຊີທີ **(ຄອມພິວເຕີໂນດບຸກ-ຄອມພິວເຕີຕັ້ງໂຕະ-ເຄື່ອງພິມ+ເຄື່ອງກອັບປີ້-ເຄື່ອງສະແກນເນີ)**, ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ **60 ມື້**, ດັ່ງລະອຽດລຸ່ມນີ້:

| ລຳດັບ | ລາຍການສິນຄ້າ | ຫົວໜ່ວຍ | ຈຳນວນ | ສະຖານທີ່ສົ່ງ-ມອບ |
|---|---|---|---|---|
| 1 | ຄອມພິວເຕີໂນດບຸກ (Outfield Laptop) | ເຄື່ອງ | 3 | ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, 60 ມື້ ພາຍຫຼັງເຊັນສັນຍາ. |
| 2 | ຄອມພິວເຕີໂນດບຸກ (Ultrabook) | ເຄື່ອງ | 4 | |
| 3 | ຄອມພິວເຕີຕັ້ງໂຕະ | ເຄື່ອງ | 70 | |
| 4 | ເຄື່ອງພິມ + ເຄື່ອງກອັບປີ້ | ເຄື່ອງ | 37 | |
| 5 | ເຄື່ອງສະແກນເນີ | ເຄື່ອງ | 37 | |

3. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດ

ຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດຂອງກະຊວງການເງິນ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາມີນາ 2019.

4. ຊອງປະມູນຕ້ອງສົ່ງກ່ອນເວລາ **10:00 ໂມງ ຂອງ ວັນທີ 23 ກຸມພາ 2024** ທີ່ຫ້ອງປະຊຸມຊັ້ນ 2, ຫ້ອງ 218, ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຢູ່ບ້ານທົ່ງຂັນຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.

ຊອງປະມູນສົມທຽບລາຄາທຸກໆ ຊອງຈະໄດ້ເປີດໃນເວລາ **10:10 ໂມງ ຂອງ ວັນທີ 23 ກຸມພາ 2024**, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຊອງປະມູນຕ້ອງສົ່ງເຖິງ:**

1. ທ່ານ ພອນທິບ ທໍ່ແກ້ວ ໂທລະສັບ: 020 5599 9954 ອີແມວ: phnokeo@gmail.com, ແລະ
2. ນາງ ອຳພາພອນ ວົງມົນຕີ ໂທລະສັບ: 020 29813442 amphaphonevongmonty@yahoo.com

ຫົວໜ້າກົມ

ກົມທີ່ດິນ

ຄິດລາໄຊ ກອກມີລາ